ພັກປະຊາຊົນປະຕິວັດລາວ

# ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ

## ແຂວງສາລະວັນ ຄັ້ງທີ 2 ສະໄໝທີ X

ວັນທີ 17-18 ກັນຍາ 2025

## ມະຕິ

## ກອງປະຊຸມຄົບຄະນະບໍລິຫານງານພັກ ແຂວງສາລະວັນ ຄັ້ງທີ 2 ສະໄໝທີ IX.

---

ກອງປະຊຸມຄົບຄະນະບໍລິຫານງານພັກ ແຂວງສາລະວັນ ຄັ້ງທີ 2 ສະໄໝທີ X ໄດ້ດຳເນີນຂຶ້ນໃນເຊົ້າຂອງວັນທີ 17 ກັນຍາ 2025 ຫາ ວັນທີ 18 ກັນຍາ 2025 ເປັນເວລາ 2ມື້ເຕັມ ທີ່ສະໂມສອນຂອງແຂວງ, ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ປອ ດາວວົງ ພອນແກ້ວ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງ ເຊິ່ງໄດ້ກຳນົດອອກເປັນ 2 ວາລະຄື:

1. ວາທີ 1 ແມ່ນກອງປະຊຸມພາຍໃນຄະນະບໍລິຫານງານພັກແຂວງ 1ມື້ ມີບັນດາສະຫາຍຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເລຂາພັກເມືອງ ເຂົ້າຮ່ວມ ຈຳນວນ 34 ສະຫາຍ, ຍິງ 4 ສະຫາຍ.
2. ວາລະທີ 2 ແມ່ນກອງປະຊຸມເປີດກວ້າງ 1 ມື້ ມີຄະນະບໍລິຫານງານພັກແຂວງ, ປະທານ - ຮອງປະທານສະພາປະຊາຊົນແຂວງ, ຮອງເຈົ້າແຂວງ, ເລຂາຄະນະພັກຮາກຖານ - ໜ່ວຍພັກອ້ອມຂ້າງແຂວງ ແລະ ປະທານຄະນະກຳມະການປົກຄອງເມືອງເຂົ້າຮ່ວມ ຈຳນວນ 64 ສະຫາຍ, ຍິງ 6 ສະຫາຍ.

I. ກອງປະຊຸມຄັ້ງນີ້, ໄດ້ຮັບຟັງການເຜີຍແຜ່ມະຕິຕົກລົງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 797/຺ຄລສພ, ລົງວັນທີ19/8/2025 ວ່າດ້ວຍ: ການຮັບຮອງເອົາຄະນະບໍລິຫານງານພັກແຂວງສາລະວັນ ສະໄໝທີ X ຈຳນວນ 35 ສະຫາຍ, ຍິງ 4 ສະຫາຍ; ແຈ້ງການຂອງຄະນະຈັດຕັ້ງສູນກາງພັກເລກທີ 1625/ຄຈສພ, ລົງວັນທີ 15/9/2025 ກ່ຽວກັບ ການແບ່ງຄວາມຮັບຜິດຊອບຂອງຄະນະບໍລິຫານງານພັກແຂວງ ສະໄໝທີ X. ຈາກນັ້ນ; ກໍຍັງໄດ້ສຸມໃສ່ຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບ ໂຄງການດຳເນີນງານ, ຂໍ້ບົດພາລະບົດ, ສິດ - ໜ້າທີ່, ການແບ່ງຄວາມຮັບຜິດຊອບ; ການພົວພັນປະສານງານ ຂອງຄະນະບໍລິຫານງານພັກແຂວງ ແລະ ຄະນະກຳມະການປົກຄອງແຂວງ ສະໄໝທີ X. ພ້ອມນີ້ ກໍໄດ້ຕີລາຄາວຽກງານໄລຍະ 9 ເດືອນ ເພື່ອວາງທິດທາງແຜນການ 3 ເດືອນທ້າຍປີ 2025 ຕິດພັນກັບກັນນັ້ນ ກໍໄດ້ນຳເອົາວຽກທີ່ສຳຄັນຮີບດ່ວນເຂົ້າມາປຶກສາຫາລືເຊັ່ນ: ວຽກງານຄວາມຄືບໜ້າການກະກຽມ 2 ວັນປະຫວັດສາດ; ການປັບປຸງກົງຈັກພະແນກການຍຸບ - ໂຮມ; ການສ້າງຕັ້ງຕາແສງ; ການເປີດສົກຮຽນ - ກະກຽມເຂົ້າຮ່ວມງານມະຫາກຳກິລາແຫ່ງຊາດຄັ້ງທີ 12; ການກະກຽມເປີດລະດູການທ່ອງທ່ຽວ; ການເກັບລາຍຮັບອາກອນ ແລະ ການສະຫຼຸບຄືນວຽກງານຂອງອະນຸກຳມະການຕ່າງໆ ພາຍຫຼັງສຳເລັດກອງປະຊຸມໃຫຍ່ຄັ້ງທີ X.

II. ກອງປະຊຸມ ໄດ້ຕົກລົງເອກະພາບຮັບຮອງເອົາເນື້ອໃນເອກະ ສານທີ່ສຳຄັນດັ່ງນີ້:

1. ຮັບຮອງເອົາການແບ່ງງານພາຍໃນຄະນະບໍລິຫານງານພັກແຂວງສາລະວັນ ສະໄໝທີ X.
2. ຮັບຮອງເອົາໂຄງການດຳເນີນງານ ຂອງຄະນະບໍລິຫານງານພັກແຂວງ ສະໄໝທີ X (2025 -2030).
3. ຮັບຮອງເອົາຂໍ້ກຳນົດ ວ່າດ້ວຍ: ທີ່ຕັ້ງພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ແບບແຜນວິທີເຮັດວຽກຂອງຄະນະບໍລິຫານງານພັກ ແຂວງສາລະວັນ ສະໄໝທີ X.
4. ຮັບຮອງເອົາການແບ່ງວຽກຊີ້ນຳບັນດາເມືອງຂອງຄະນະປະຈຳພັກແຂວງສະໄໝທີ X.

ສ່ວນເອກະສານຂອງຄະນະກຳມະການປົກຄອງແຂວງສະໄໝທີ X ແມ່ນຈະໄດ້ສືບຕໍ່ນຳເຂົ້າກອງປະຊຸມອົງການປົກຄອງແຂວງຄັ້ງທີ 1 ຊຸດທີ X ເພື່ອຕົກລົງ ແລະ ຮັບຮອງຕື່ມພາຍຫຼັງ.

I.ກອງປະຊຸມໄດ້ຕີລາຄາວ່າ ໃນໄລຍະ 9 ເດືອນຕົ້ນປີ 2025 ຜ່ານມາ ເຖິງແມ່ນວ່າແຂວງສາລະວັນ ຈະພົບບັນຫາ ໄພເງິນເຟີ້, ສິນຄ້າລາຄາແພງ, ບັນຫາເສັ້ນທາງເປ່ເພ ແລະ ປະກົດການຫຍໍ້ທໍ້ຕ່າງໆເກີດຂຶ້ນ ແຕ່ດ້ວຍຄວາມຮັບຜິດຊອບສູງຂອງຄະນະພັກແຕ່ລະຂັ້ນ ຈຶ່ງເຮັດໃຫ້ທົ່ວແຂວງ ຍັງມີຄວາມສະຫງົບ - ຄວາມເປັນລະບຽບຮຽບຮ້ອຍດີ ເສດຖະກິດມີການຂະຫຍາຍ ຕົວຢ່າງຕໍ່ເນື່ອງ, ສາມາດຈັດເກັບລາຍຮັບເຂົ້າງົບປະມານຂອງລັດ 9 ເດືອນ ບັນລຸ 81,96 %. ສຳເລັດການສະເຫຼີມສະຫຼອງ 1 ວັນປະຫວັດສາດ ( ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ ). ການປູກເຂົ້ານາປີປະຕິບັດໄດ້ລື່ນແຜນ 1%. ພົ້ນເດັ່ນແມ່ນໄດ້ສຳເລັດກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງຄັ້ງທີ X ເຊິ່ງເປັນແຂວງທຳອິດໃນທົ່ວປະເທດ. ຕິດພັນກັບການເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງພັກ - ລັດແຕ່ລະຂັ້ນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ.

ແຕ່ໄປຄຽງຄູ່ກັບນັ້ນ, ກໍຍັງເຫັນວ່າ: ໃນໄລຍະ 9 ເດືອນຜ່ານມາ ກໍຍັງເຫັນວ່າ ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ຍັງບໍ່ທັນແຂງແຮງ, ການຜະລິດເປັນສິນຄ້າທົດແທນການນໍາເຂົ້າ ຍັງເຮັດບໍ່ທັນໄດ້ຫຼາຍ, ການຄຸ້ມຄອງລາຄາສິນຄ້າຕາມທ້ອງຕະຫຼາດ, ການຄຸ້ມຄອງອາຄານຮຽນ, ການຄຸ້ມຄອງສັດລ້ຽງ ໃນເທສະບານແຂວງ ຍັງບໍ່ທັນໄດ້ດີ. ການສ້າງຂະບວນການຂອງອົງການຈັດຕັ້ງມະຫາຊົນ ແລະ ການປະກອບສ່ວນຂອງມະຫາຊົນ ໃນການກະກຽມຕ້ອນຮັບກອງປະຊຸມໃຫຍ່ຂັ້ນສູນກາງ ແລະ ການສະເຫຼີມສະຫຼອງ 2 ວັນປະຫວັດສາດ ຍັງບໍ່ທັນຟົດຟື້ນເທົ່າທີ່ຄວນ.

III. ກອງປະຊຸມໄດ້ຮັບຮອງເອົາ ທິດທາງແຜນການ ແລະ ຈຸດສຸມ 3 ເດືອນທ້າຍ ( 10,11,12 ) ປີ 2025 ດັ່ງນີ້:

ກ. ທິດທາງລວມ

ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ຕ່າງໆ ໃນທົ່ວສັງຄົມ ໃຫ້ຫຼຸດລົງ; ຈັດເກັບລາຍຮັບເຂົ້າງົບ ປະ ມານໃຫ້ໄດ້ຕາມ ແຜນ ຫຼື ລື່ນແຜນທີ່ວາງໄວ້; ຍາດແຍ່ງການລົງທຶນ ໃນຂົງເຂດກະສິກໍາ, ອຸດສາຫະ ກໍາປຸງ ແຕ່ງ, ໄຟຟ້າພະລັງງານລົມ, ແສງຕາເວັນ ໃຫ້ຫຼາຍຂຶ້ນ; ປະຕິບັດມາດຕະການປະຢັດຕ້ານການ ຟຸມເຟືອຍ ຕາມດໍາລັດ 205 ຂອງລັດຖະບານ; ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ຕາມມະຕິ 04 ຂອງກົມການເມືອງສູນກາງພັກ; ສືບຕໍ່ແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ - ການເງິນ ຕາມຂໍ້ຕົກລົງເລກທີ 116/ນຍ; ສູ້ຊົນກ່ຽວກັບການສະເໜີປະຕິບັດໂຄງການກໍ່ສ້າງ - ສ້ອມແປງຂົວ ແລະ ທາງ; ປະເມີນ ແລະ ຢັ້ງຢືນ ພົນສໍາເລັດການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ, ວຽກງານ 3 ສ້າງ ຕິດພັນກັບ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ; ສະຫຼຸບ - ປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນປະຈໍາປີ 2025; ສະເຫຼີມສະຫຼອງວັນຊາດທີ 2 ທັນວາ ຄົບຮອບ 50 ປີ, ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 105 ປີ ແລະ ກະກຽມເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທີ XII ຂອງສູນກາງພັກ.

ຂ. ທິດທາງແຜນການນໍາພາຮອບດ້ານ ໄລຍະ 3 ເດືອນທ້າຍ ປີ 2025.

**1.** ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ - ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຂອງພັກ; ຍົກສູງຄຸນນະພາບຂອງກໍາລັງປະກອບອາວຸດ, ທັບມ້າງກົນອຸບາຍຍຸດທະສາດການຫັນປ່ຽນ ໂດຍສັນຕິຂອງສັດຕູ, ສືບຕໍ່ປະຕິບັດ 4 ໜ້າທີ່ໃຫຍ່ 26 ແຜນງານ ຂອງກະຊວງປ້ອງກັນປະເທດວາງອອກ, ຈັດຕັ້ງກໍາລັງກຽມພ້ອມສູ້ຮົບ 3 ພາວະເຂັ້ມງວດ; ເອົາໃຈໃສ່ໃນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນທົ່ວແຂວງ, ຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນສັງຄົມ ເປັນຕົ້ນ: ຂີ້ລັກງັດແງະ, ຢາເສບຕິດ, ອຸປະຕິເຫດ ແລະ ອື່ນໆ ໃຫ້ຫຼຸດລົງ. ຂະຫຍາຍ ແລະ ຄຸ້ມຄອງເງິນ ຄັງແຮ ປກຊ - ປກສ ຂັ້ນບ້ານ ໃຫ້ເຂົ້າສູ່ລະບົບ; ສ້າງແຜນປ້ອງກັນເວນຍາມຕາມສໍານັກງານ - ອົງການ, ຈຸດສຸມສໍາຄັນຕ່າງໆ ເພື່ອກະກຽມໃສ່ງານບຸນສໍາຄັນຕ່າງໆຂອງຊາດ - ຂອງພັກ ເປັນຕົ້ນ: ການສະເຫຼີມ ສະຫຼອງ 2 ວັນປະຫວັດສາດ, ກອງປະຊຸມໃຫຍ່ຄັ້ງທີ 12 ຂອງສູນກາງພັກ, ຮັບປະກັນຄວາມສະຫງົບ - ປອດໄພ ໃຫ້ໄດ້ 100%.

**2.** ວຽກງານ ເສດຖະກິດ.

- ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວສະເລ່ຍ ໃນລະດັບ 6,5% ຂຶ້ນໄປ, ກະກຽມສະຫຼຸບແຜນປີ 2025 ແລະ ວາງແຜນປີ 2026. ສືບຕໍ່ປັບປຸງແກ້ໄຂຄວາມຫຍຸ້ງຍາກໃນການດໍາເນີນທຸລະກິດ ແລະ ການລົງທຶນ, ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການດຶງດູດການລົງທຶນ ທັງພາກລັດ ແລະ ເອກະຊົນ ພາຍໃນ - ຕ່າງປະເທດ, ຫຼຸດຜ່ອນຂອດຂັ້ນທີ່ບໍ່ຈໍາເປັນ. ການສ້າງສູນການບໍລິການຜ່ານປະຕູດຽວ ແລະ ສ້າງກົນໄກປົກປ້ອງນັກລົງທຶນ.
- ສູ້ຊົນຈັດເກັບລາຍຮັບເຂົ້າງົບປະມານງວດສຸດທ້າຍປີ 2025 ໃຫ້ລື່ນແຜນການທີ່ວາງໄວ້, ກະກຽມສະຫຼຸບປິດສົບໂນງທົ່ວແຂວງ ແລະ ວາງແຜນປີ 2026, ເອົາໃຈໃສ່ຄຸ້ມຄອງລາຍຈ່າຍ ໃຫ້ເຂັ້ມງວດຕາມລະບຽບກົດໝາຍ. ຈັດຕັ້ງປະຕິບັດດໍາລັດ 599/ລບ ແລະ ຂໍ້ຕົກລົງ 169/ນຍ ເພື່ອຫັນກໍາມະສິດລົດ ລັດ ຕາມເປົ້າໝາຍສະສາງໃຫ້ສໍາເລັດ.
- ຕິດຕາມຊຸກຍູ້ການເກັບກ່ຽວທ້າຍລະດູເຂົ້ານາປີ, ພົດພັກສະບຽງອາຫານໃຫ້ມີຄຸນນະພາບ ແລະ ບັນລຸຕາມແຜນທີ່ວາງໃວ້, ເພີ່ມທະວີການວຽກວິຊາການ - ແນະນໍາວິທີການນໍາໃຊ້ເຕັກນິກວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກໍາໃໝ່ ທີ່ເປັນມິດກັບສິ່ງແວດລ້ອມ, ສ້າງໃຫ້ມີຜະລິດຕະພັນກະສິກໍາສົດ, ສະອາດ, ປອດສານພິດ ເພື່ອສົ່ງອອກ

ແລະ ຊົມໃຊ້ພາຍໃນ ສາມາດທົດແທນການນຳເຂົ້າ. ສືບຕໍ່ເຂັ້ມງວດ ໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້, ການລັກລອບຕັດໄມ້, ຊື້-ຂາຍໄມ້ ແລະ ການບຸກລຸກ ທຳລາຍ ປ່າໄມ້ ຕາມຄຳສັ່ງ 15/ນຍ ແລະ ຄຳສັ່ງ 11/ນຍ ຢ່າງແຂງແຮງ.

- ສືບຕໍ່ຈັດຕັ້ງປະຕິບັດໂຄງການກໍ່ສ້າງຂະຫຍາຍຕາຂ່າຍໄຟຟ້າແຮງກາງ, ແຮງຕໍ່າ ແລະ ການຂະຫຍາຍລະບົບຕາຂ່າຍໄຟຟ້າເຂົ້າບ້ານ ແລະ ເຮືອນປະຊາຊົນ; ເກັບກຳຂໍ້ມູນຈຸດປະກົດແຮ່ ເພື່ອເປັນຖານຂໍ້ມູນວາງແຜນ ແລະ ດຶງດູດການລົງທຶນ ພ້ອມທັງເອົາໃຈໃສ່ຄຸ້ມຄອງບັນດາ ບໍລິສັດທີ່ດຳເນີນກິດ ຈະການ ດ້ານບໍ່ແຮ່ໃນທົ່ວແຂວງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນຕາມຂັ້ນຕອນ, ບົດວິພາກເສດຖະກິດ - ເຕັກນິກ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ.

- ສືບຕໍ່ຄຸ້ມຄອງສິນຄ້າ ນອກລະບົບ, ສິນຄ້າເກືອດຫ້າມໃຫ້ເຂັ້ມງວດທາງກົດໝາຍ, ການສະໜອງ ນ້ຳມັນເຊື້ອໄຟໃຫ້ພຽງພໍ, ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ຜູ້ປະກອບ ການຈຸລະວິສາ ຫະກິດ ແລະ ວິສາຫະກິດຂະໜາດນ້ອຍ, ຂະໜາດກາງ ໃຫ້ສາມາດ ເຂົ້າເຖິງແຫຼ່ງທຶນ ໃຫ້ຫຼາຍຂຶ້ນ ໂດຍເລັ່ງການຈັດຕັ້ງ ປະຕິບັດນະໂຍບາຍສິນເຊື່ອຕາມຂໍ້ຕົກລົງເລກທີ 93/ນຍ ໃຫ້ເປັນຮູບ ປະທຳ ເພື່ອກະຕຸ້ນເສດຖະກິດ ພາຍໃນແຂວງ ໃຫ້ແຂງແຮງ, ຊຸກຍູ້ສົ່ງເສີມການຄ້າຊາຍແດນ ແລະ ຄຸ້ມຄອງການນຳເຂົ້າສິນຄ້າ ທີ່ບໍ່ຈຳ ເປັນຈາກຕ່າງປະເທດໃຫ້ຫຼຸດລົງ.

- ສືບຕໍ່ປຸກລະດົມກຳລັງແຮງສັງລວມ ຂອງທົ່ວສັງຄົມ ເຂົ້າໃສ່ການກໍ່ສ້າງ ແລະ ປົກປັກຮັກສາ ພື້ນຖານໂຄງລ່າງເສັ້ນທາງ ແລະ ຂົວ ໃຫ້ສາມາດນຳໃຊ້ໄດ້ຢ່າງຍາວນານ, ຊຸກຍູ້ການຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງ ແລະ ໂຄງການກໍ່ສ້າງກັບເຈື່ອນໃຫ້ມີຄວາມຄືບໜ້າ. ສຸມແຫຼ່ງທຶນ ເພື່ອສ້ອມແປງ ແລະ ຍົກລະດັບເສັ້ນທາງຫຼວງແຫ່ງຊາດ, ທາງຫຼວງທ້ອງຖິ່ນ, ເສັ້ນທາງເທສະບານແຂວງ, ທາງຊົນນະບົດ, ທາງລຽບຊາຍແດນ. ສ້າງທຸກເງື່ອນໄຂໃຫ້ແກ່ການກໍ່ສ້າງທາງຍຸດທະສາດຂອງແຂວງ ເປັນຕົ້ນ ເສັ້ນທາງ S3, ຂົວຂ້າມນ້ຳຂອງແຫ່ງທີ 6, ສ້າງຕະຝັ່ງເຈື່ອນແມ່ນ້ຳເຊໂດນ ແລະ ແມ່ນ້ຳຂອງ. ພັດທະນາລະບົບຂົນສົ່ງສິນຄ້າ-ໂດຍສານ ໃຫ້ໄດ້ມາດຕະຖານ; ສູ້ຊົນສະໜອງນ້ຳປະປາໃຫ້ 61 ບ້ານຂອງເມືອງຕະໂອ້ຍ; ຄຸ້ມຄອງ-ຕິດຕາມ ກວດກາບ້ຳໜັກລົດບັນ ທຸກໃຫ້ຖືກຕ້ອງຕາມລະບຽບຂອງກະຊວງ ຍທຂ.

- ສືບຕໍ່ການສຳຫຼວດ - ວັດແທກສ້າງຖານສຳມະໂນທີ່ດິນ ແລະ ຍັ້ງຢືນດ້ານສິ່ງແວດລ້ອມ, ກວດກາຄຸນນະພາບນ້ຳສາຍຫຼັກ - ເກັບກຳຂໍ້ມູນຂຸດເຈາະນ້ຳໃຕ້ດິນ - ຂຶ້ນບັນຊີນ້ຳໃຕ້ດິນ, ເປັນເຈົ້າການຮັບມືກັບໄພທຳມະຊາດ, ແຈ້ງລະບົບເຕືອນໄພໃຫ້ວ່ອງໄວທັນການ.

- ສືບຕໍ່ເຄື່ອນໄຫວຄຸ້ມຄອງ ແລະ ນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການບໍລິຫານລັດ, ສ້າງແຜນຄົ້ນຄ້ວາການຫັນເປັນດີຈີຕ້ອນຂອງແຂວງ; ຂະຫຍາຍເຄືອ ຄ່າຍສັນຍານໂທລະສັບ ໃຫ້ເຖິງເຂດຊົນນະບົດຫ່າງໄກ.

3. ວຽກງານວັດທະນະທຳ - ສັງຄົມ

- ສືບຕໍ່ຈັດຕັ້ງການຮຽນ- ການສອນຕາມ 3 ລັກສະນະ, 5 ຫຼັກມູນຂອງການ ສຶກສາພາກລັດ ແລະ ເອກະຊົນໃຫ້ມີຄຸນນະພາບສູງຂຶ້ນ ເພື່ອໃຫ້ບັນລຸ 12 ຕົວຊີ້ວັດທີ່ວາງໄວ້, ສົ່ງເສີມ ແລະ ຂະຫຍາຍໂອກາດການເຂົ້າເຖິງການສຶກສາກ່ອນໄວຮຽນ, ປັບປຸງຄຸນນະພາບການຮຽນ - ການສອນໃນຊັ້ນປະຖົມສຶກສາ, ຍົກສູງຄຸນນະພາບການສຶກສາຊັ້ນມັດທະຍົມ. ຊຸກຍູ້ການອອກກຳລັງເພື່ອສຸຂະພາບ. ກະກຽມຝຶກຊ້ອມ, ຄັດເລືອກ ນັກກິລາ ແລະ ກຳນົດກິລາປະເພດຕ່າງໆ ເພື່ອເຂົ້າຮ່ວມງານມະຫາກຳກິລາແຫ່ງຊາດຄັ້ງທີ 12 ໃນເດືອນພະຈິກ 2025 ທີ່ນະຄອນຫຼວງວຽງຈັນ, ກະກຽມຝຶກຊ້ອມ - ຄັດເລືອກນັກກິລາມວຍ ເພື່ອເຂົ້າຮ່ວມແຂ່ງຂັນໃນງານຊີເກມ ຄັ້ງທີ 33 ທີ່ປະເທດໄທ. ກະກຽມສະເຫຼີມສະຫຼອງວັນຄູແຫ່ງຊາດ ( 7 ຕຸລາ ) ປີ 2025. ສ້າງບ້ານທ່ອງທ່ຽວໃຫ້ເພີ່ມຂຶ້ນ ( ຢ່າງໜ້ອຍໃຫ້ໄດ້ 1 ບ້ານ ).

- ສືບຕໍ່ເອົາໃຈໃສ່ເຝົ້າລະວັງ ແລະ ຄວບຄຸມພະຍາດຕິດຕໍ່ຈາກສັດສູ່ຄົນ, ພະຍາດຕາມລະດູການ, ພັດທະນາຄຸນນະພາບການປິ່ນປົວຂອງພະນັກງານແພດ-ໝໍ ໃຫ້ໄດ້ມາດຖານ ແລະ ມີການບໍລິການຢ່າງ ມີຈັນຍາບັນ, ຈັນຍາທຳ ມີມາລະຍາດ ຕາມນະໂຍບາຍ 5 ດີ 1 ພໍໃຈ; ປັບປຸງຕາໜ່າງບໍລິການໃນ ແຕ່ລະ ດ້ານໃຫ້ມີຄຸນນະພາບສູງຂຶ້ນ, ສະໜອງຢາປົວພະຍາດໃຫ້ພຽງພໍ.

- ສືບຕໍ່ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ - ຂອງທ້ອງຖິ່ນ, ປະຕິສັງຂອນວັດວາ ສາ ສະໜາ ແລະ ວັດຖຸບູຮານ, ສືບຕໍ່ການຂຶ້ນທະບຽນວັດໜອງສອງຫ້ອງ ( ພະແກ້ວນ້ຳຫຍາດພິກໝອກ) ບ້ານນາໄພ ເມືອງວາງວຽງ, ຫັດຖະກຳຕ່ຳແຜ່ນແພເຜົ່າຕະໂອ້ຍ ແລະ ປາໂກະ ເປັນມໍລະດົກແຫ່ງຊາດລະດັບທ້ອງຖິ່ນ. ສ້າງຄອບຄົວ-ບ້ານ ວັດທະນະທຳໃຫ້ໄດ້ ເພີ່ມຂຶ້ນ, ປັບປຸງສະຖານທີ່ທ່ອງທ່ຽວ ໃຫ້ມີຄວາມສວຍງາມ ເພື່ອດຶງດູດນັກທ່ອງທ່ຽວໃຫ້ໄດ້ ເພີ່ມຂຶ້ນ.

- ສືບຕໍ່ຝຶກອົບຮົມ ແລະ ພັດທະນາສີມືແຮງງານ ໃຫ້ໄດ້ 1 ພັນກວ່າຄົນ ຕິດພັນກັບຄຸນນະພາບ ເພື່ອ ຮອງ ຮັບໃຫ້ ຕະຫຼາດແຮງງານ; ສູ້ຊົນຈັດຫາວຽກເຮັດງານທຳໃຫ້ໄດ້ 1ພັນຄົນຂຶ້ນໄປ. ເອົາໃຈໃສ່ ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີ ຜົນງານ, ຄຸນງາມຄວາມດີໃນພາລະກິດ ປະຕິວັດຊາດ ປະຊາທິປະໄຕ ໃຫ້ໄດ້ 600 ຄົນຂຶ້ນໄປ.ປັບປຸງວຽກງານການ ຊ່ວຍເຫຼືອຜູ້ປະສົບໄພພິບັດທາງທຳມະຊາດ ໃຫ້ວ່ອງໄວ-ທັນການ; ສືບຕໍ່ເຄື່ອນໄຫວວຽກງານເກັບກູ້ລະເບີດອອກຈາກ ພື້ນທີ່ການຜະລິດ, ປຸກລະດົມການບໍລິຈາກ ເລືອດ ໃຫ້ໄດ້ເພີ່ມຂຶ້ນ.

**3.** ວຽກງານ ບູລະນະກົງຈັກລັດ ແລະ ອົງການປົກຄອງ

- ສືບຕໍ່ຈັດຕັ້ງເຄື່ອນໄຫວພົບປະ, ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ, ບັນດາມະຕິຂອງສະພາ ແຫ່ງຊາດ ແລະ ສະພາປະຊາຊົນແຂວງ; ຄົ້ນຄວ້າພິຈາລະນາ ຮັບຮອງເອົານິຕິກຳໃຕ້ກົດໝາຍ, ຮັບຮອງການປັບປຸງກົງຈັກ ຂອງອົງການປົກຄອງແຂວງ, ບັນດາພະແນກການອ້ອມຂ້າງແຂວງ ແລະ ບັນຫາສຳຄັນຕ່າງໆ; ກະກຽມຄວາມ ພ້ອມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ ຊຸດທີ 4, ກະກຽມບັ້ນ ເລືອກຕັ້ງສະມາຊິກສະພາແຫ່ງ ຊາດປະຈຳເຂດ ເລືອກຕັ້ງທີ 14 ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ 5.

- ສືບຕໍ່ຄົ້ນ ຄວ້າ ສັບຊ້ອນບຸກຄະລາກອນ ແຕ່ລະຕຳແໜ່ງງານ ຂອງແຕ່ລະພະແນກການ-ອົງການ ທີ່ຖືກໂຮມ ແລະ ໂອນວຽກໄປຂຶ້ນກັບພາກສ່ວນອື່ນ ແລະ ຈັດພິທີປະກາດໂຮມພະແນກ ແລະ ມອບ-ຮັບບັນດາພະແນກການທີ່ຍັງບໍ່ ທັນສຳເລັດ ຕິດພັນກັບການຊຸກຍູ້ ການຂຽນພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ. ຄົ້ນຄວ້າກະກຽມສ້າງຕັ້ງ ຫ້ອງການ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການ ລົງທຶນ ແຂວງ,

- ສືບຕໍ່ຍົກສູງຄຸນນະພາບການພິຈາລະນາຕັດສີນຄະດີ, ຕິດຕາມ, ກວດກາ ການປະຕິບັດກົດ ໝາຍ, ຍົກ ສູງຄຸນນະພາບການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການປະຕິບັດກົດໝາຍ ໃນການດຳເນີນຄະດີຢູ່ ສານຢ່າງເຂັ້ມງວດ; ເອົາໃຈໃສ່ຕິດຕາມກວດກາປະຕິບັດຄຳຕັດສີນຂອງສານ, ປະຕິບັດກົດໝາຍໃນສະຖານທີ່ກັກ ຂັງ. ສຸມດັດສ້າງ ເພື່ອຈຳກັດການລະເມີດກົດໝາຍ ໃນການດຳ ເນີນຄະດີ. ກະກຽມອະໄພຍະໂທດ ໃຫ້ນັກໂທດ ປະຈຳ ປີ 2025.

- ເພີ່ມທະວີວຽກງານຍຸຕິທຳ ໂດຍການໂຄສະນາ ເຜີຍແຜ່ກົດໝາຍທາງວິທະຍຸ - ໂທລະໂຄງໃຫ້ໄດ້ 200 ຄັ້ງ ຂຶ້ນໄປ ເພື່ອສ້າງບ້ານແບບຢ່າງປະຕິບັດກົດໝາຍ ແລະ ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ໄດ້ຕາມແຜນ; ຊຸກຍູ້ການສ້າງນິຕິກຳໃຕ້ກົດໝາຍ 2026-2030 ແລະ 3 ພະແນກການທີ່ສະພາຮັບຮອງແລ້ວ.ປັບປຸງແຜນວິທີເຮັດ ວຽກຂອງຄະນະແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ; ເປັນເຈົ້າການປະຕິບັດຄຳ ຕັດສີນຂອງສານ.

**4.** ວຽກງານແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ.

- ກະກຽມ ແລະ ດຳເນີນ ກອງປະຊຸມໃຫຍ່ຜູ້ແທນພຣະສົງທົ່ວແຂວງສາລະວັນ ສະໄໝທີ IX, ກອງປະຊຸມໃຫຍ່ຜູ້ ແທນແນວລາວສ້າງຊາດ ຄັ້ງທີ VIII.

- ສືບຕໍ່ຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງ, 4 ບຸກຂອງຄະນະບໍລິຫານງານຊາວໜຸ່ມ , 5 ເປັ ນເຈົ້າ ຂອງສະຫະພັນກຳມະບານ, 3 ດີ, 6 ຮັກສາຂອງສະຫະພັນນັກຮົບເກົ່າ ຕິດພັນກັບການສືບຕໍ່ຜັນຜັນຂະຫຍາຍມະ ຕິກອງປະຊຸມໃຫຍ່ຂັ້ນຂອງຕົນໃຫ້ເປັນຮູບປະທຳ.

- ກະກຽມເຂົ້າຮ່ວມກອງປະຊຸມໃຫຍ່ຜູ້ແທນສະຫະພັນກຳມະບານລາວຄັ້ງທີ IX ແລະ ກອງປະຊຸມໃຫຍ່ຜູ້ ແທນສະຫະພັນນັກຮົບເກົ່າລາວຄັ້ງທີ V. ກອງປະຊຸມໃຫຍ່ສູນກາງແນວລາວສ້າງຊາດຄັ້ງທີ VIII.

5. ວຽກງານການຕ່າງປະເທດ

ສືບຕໍ່ຄົ້ນຄວ້າ, ທົບທວນ, ຜັນຂະຫຍາຍ ເນື້ອໃນບົດບັນທຶກຄວາມຊົງຈຳລະຫ່ວາງ ແຂວງສາ ລະວັນ ກັບ ບັນດາແຂວງ ຂອງ ສສ ຫວຽດນາມ ທີ່ໄດ້ລົງນາມໄວ້ແລ້ວ ໃຫ້ປະກົດຜົນເປັນຈິງ ພາຍຫຼັງ ໂຮມແຂວງຂອງ ສສ ຫວຽດນາມ ແລະ ພາຍຫຼັງສຳເລັດກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງສາລະວັນ ຄັ້ງທີ X. ຕິດຕາມ ການເຄື່ອນໄຫວຂອງບັນດາໂຄງການ ຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດ ລັດຖະບານ. ກະກຽມຄວາມພ້ອມເຂົ້າ ຮ່ວມກອງປະຊຸມ ຄະນະ ກຳມະການຮັກສາຄວາມສະຫງົບຮຽບ ຮ້ອຍຕາມບໍ ລິເວນຊາຍແດນ ລາວ-ໄທ (ສາລະ ວັນ-ອຸບົນຣາ ຊະທານີ) ຄັ້ງທີ 14 ທີ່ຈັງຫວັດ ອຸບົນຣາຊະ ທານີ ເປັນເຈົ້າພາບ. ສືບຕໍ່ການພົບປະຂອງຂະແໜງການ ຂອງແຂວງ ທີ່ໄດ້ເຊັນບົດບັນທຶກຊ່ວຍຈຳ ຮ່ວມກັບບັນດາຂະແໜງການຂອງແຂວງ ສສ ຫວຽດນາມ.

6. ວຽກງານກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກ ແລະ ວຽກງານ 3 ສ້າງ

- ສືບຕໍ່ປັບປຸງລະບົບການເມືອງຢູ່ຂັ້ນຮາກຖານ ເພື່ອຍົກສູງຄວາມສາມາດນຳພາຂອງຄະນະພັກ ແລະ ອົງການປົກຄອງແຕ່ລະຂັ້ນ ຕໍ່ວຽກງານກໍ່ສ້າງຮາກຖານການເມືອງ ຢ່າງແຂງແຮງ, ກະກຽມສະຫຼຸບວຽກງານກໍ່ ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ - ແກ້ໄຂຄວາມທຸກຍາກ, ວຽກງານ 3 ສ້າງ ແລະ ກະກຽມທັບ ພະນັກງານລົງກໍ່ສ້າງຮາກຖານຢູ່ເມືອງໄລຍະ ທີ1 ( 2026-2028 ).

- ສືບຕໍ່ພັດທະນາດ້ານພື້ນຖານໂຄງລ່າງຊົນນະບົດ. ຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ປະຊາຊົນ ມີອາຊີບ ທີ່ໝັ້ນຄົງ ເພື່ອເຮັດໃຫ້ຊີວິດການເປັນຢູ່ ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນ ໄດ້ຮັບ ການຍົກ ລະດັບດີຂຶ້ນ, ສຸມແຫຼ່ງທຶນເຂົ້າໃສ່ການກໍ່ສ້າງ-ສ້ອມແປງ ເສັ້ນທາງ - ຂົວໃຫ້ເຂົ້າເຖິງບ້ານ ທຸກຍາກ; ຂະຫຍາຍຕາຂ່າຍໄຟຟ້າ ໄປເຖິງເຂດຫ່າງໄກສອກຫຼີກ, ປັບປຸງ-ກໍ່ສ້າງ ການຂະຫຍາຍໂຮງ ຮຽນ, ການບໍລິການດ້ານສາທາລະນະສຸກ ໃຫ້ພຽງພໍ.

- ສູ້ຊົນຈັດຕັ້ງປະຕິບັດການປະເມີນ ໄລຍະກາງສະໄໝ ຕາມດຳລັດ 348/ລບ ໃຫ້ສຳເລັດຕາມ ໄລ ຍະເວລາ ໂດຍຕິດພັນກັບການປະຕິບັດບັນດາຄາດໝາຍຕ່າງໆ ເປັນຕົ້ນ: ລຶບລ້າງຄອບຄົວ, ບ້ານ ແລະ ເມືອງທຸກຍາກ ໃຫ້ໄດ້ 600 ຄອບຄົວ, 20ບ້ານ, 1 ເມືອງ ( ເມືອງສະໝ້ວຍ ), ສ້າງຄອບ ຄົວພັດ ທະນາໃຫ້ໄດ້ 1.930 ຄອບຄົວ, ສ້າງ ບ້ານພັດທະນາໃຫ້ໄດ້ 58 ບ້ານ, ສ້າງບ້ານໜອງແກ ເມືອງເລົ່າງາມ ແລະ ປະກາດບ້ານ ພູຖ້ຳພອງ ເມືອງລະຄອນ ເພັງ ເປັນບ້ານໃຫຍ່ຄ້າຍຄືຕົວເມືອງນ້ອຍໃນຊົນນະບົດໃຫ້ສຳເລັດ.

- ສືບຕໍ່ຜັນຂະຫຍາຍມະຕິ ເລກທີ 25/ກມສພ, ດຳລັດ 309/ນຍ, ຄຳສັ່ງ ເລກທີ 34/ນຍ ວ່າດ້ວຍທິດທາງເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງ ບ້ານເປັນຫົວໜ່ວຍພັດທະນາ ຕິດພັນກັບວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ໂດຍສຸມໃສ່ການສ້າງເມືອງໃນ 5 ດ້ານ, ການສ້າງບ້ານພັດທະນາ ແລະ ສ້າງບ້ານຈຸດສຸມ ໃຫ້ກາຍເປັນບ້ານໃຫ່ຍຄ້າຍຄືຕົວເມືອງນ້ອຍໃນຊົນນະບົດ ຕາມ 4 ເນື້ອໃນ 4 ຄາດໝາຍ. ສູ້ຊົນເປີດສູນບໍລິການຜ່ານປະຕູດຽວ ເມືອງລະຄອນເພັງໃຫ້ສຳເລັດ; ສ້າງທຸກເງື່ອນໄຂ ເພື່ອໃຫ້ໄດ້ປະກາດແຂວງສາລະວັນ ເປັນແຂວງ ຫົວໜ່ວຍຍຸດທະສາດ ໃນປີ 2025.

7. ວຽກງານ ກໍ່ສ້າງພັກ ແລະ ພະນັກງານ.

- ສືບຕໍ່ຊຸກຍູ້ໃຫ້ຄະນະພັກແຕ່ລະຂັ້ນຄົ້ນຄວ້າ, ເຊື່ອມຊຶມ, ເຜີຍແຜ່, ຈັດຕັ້ງຜັນຂະຫຍາຍມະຕິຄຳສັ່ງ ຂອງພັກ, ຂອງຊາດ, ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງຄັ້ງທີ X ແລະ ກະກຽມ ສະເຫຼີມສະຫຼອງ 2 ວັນ ປະຫວັດສາດ ຕິດພັນກັບການສ້າງຂະບວນການ ຕ້ອນຮັບກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ ໃຫ້ເປັນຂະບວນຟົດຟື້ນ.

- ປິດຊຸດຮຽນທິດສະດີການເມືອງຂັ້ນກາງ ຮຸ່ນທີ IV, ຂັ້ນຕົ້ນຮຸ່ນທີ VII ແລະ ສືບຕໍ່ເປີດຊຸດຮຽນທິດສະດີຂັ້ນ ກາງຮຸ່ນທີ V 5 ແລະ ຂັ້ນຕົ້ນຮຸ່ນທີ VIII.

- ຊຸກຍູ້, ກວດກາ, ຕິດຕາມບັນດາການຈັດຕັ້ງຮາກຖານພັກ, ໜ່ວຍພັກໃຫ້ຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນປີ 2025, ສະຫຼຸບປະເມີນແຜນກຳນົດພະນັກງານ ແລະ ສ້າງແຜນກຳນົດ ພະນັກງານນຳພາ-ຄຸ້ມຄອງຂັ້ນແຂວງ ແລະ ຂັ້ນເມືອງຄຸ້ມຄອງໃຫ້ສຳເລັດ ແລະ ເອົາໃຈໃສ່ບຳລຸງ-ກໍ່ສ້າງພະນັກງານ,

ຈັດສົ່ງພະນັກງານນຳພາ-ຄຸ້ມຄອງ, ພະນັກງານຫຼັກແຫຼ່ງ ແລະ ພະນັກງານວິຊາການທີ່ຈະສືບທອດປ່ຽນແທນ ໄປຍົກລະດັບບຳລຸງ-ກໍ່ສ້າງທາງດ້ານທິດສະດີໄລຍະສັ້ນ-ໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ.

**I.** ວຽກຈຸດສຸມ ໃນ 3 ເດືອນ (10, 11, 12) ປີ 2025.

1. ເພີ່ມທະວີວຽກງານປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນທົ່ວແຂວງ, ຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຂຶ້ນໃນສັງຄົມ; ເພີ່ມທະວີການປ້ອງເວນຍາມສຳນັກງານ-ຫ້ອງການ ແລະ ຈຸດສຸມຕ່າງໆ ເພື່ອຮັບປະກັນ ໃນໄລຍະກະກຽມສະເຫຼີມສະຫຼອງ 2 ວັນປະຫວັດສາດ ແລະ ກະກຽມໃຫ້ ແກ່ກອງປະຊຸມໃຫຍ່ຄັ້ງທີ XII ຂອງສູນກາງພັກ.

2. ຮັບປະກັນດ້ານສະບຽງອາຫານ ( ເຂົ້າ) ຂອງກຳລັງທະຫານ, ແກ້ໄຂບັນຫາປະກົດການຫຍໍ້ທໍ້ ( ຂາຍບັດເຕີມເກມ, ຊື້ລັກ, ກິນທ້ອນ, ເສບຢາ) ແລະ ເກັບທ້ອນອາວຸດເສີກ.

3. ພັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງຄັ້ງທີ X ຕິດພັນກັບພັນຂະຫຍາຍໂຄງການ - ແຜນດຳເນີນງານຂອງຄະນະບໍລິຫານງານພັກແຂວງ ແລະ ແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງສາລະວັນ ໄລຍະ 5 ປີ ( 2026-2030 ) ລົງສູ່ຮາກຖານ.

4. ປັບປຸງ ແລະ ພະລິດປຶ້ມກອງປະຊຸມໃຫຍ່ ຜູ້ແທນອົງຄະນະພັກແຂວງ ແລະ ປຶດສະເຕີຄະນະບໍລິຫານງານພັກແຂວງສາລະວັນ ສະໄໝທີ X ໃຫ້ສຳເລັດ.

5. ສະເຫຼີມສະຫຼອງ 2 ວັນປະຫວັດສາດ ( ວັນສະຖາປານາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄົບຮອບ 50 ປີ ແລະ ວັນຄ້າຍວັນເກີດປະທານໄກສອນພົມວິຫານ ຄົບຮອບ105 ປີ ).

6. ເປີດກອງປະຊຸມວຽກງານໂຄສະນາອົບຮົມທົ່ວແຂວງ 5 ປີ 2020-2025.

7. ສ້າງຂະບວນການຂຳນັບຮັບຕ້ອນ ແລະ ກະກຽມເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ XII ຂອງສູນກາງພັກ.

8. ຈັດເກັບລາຍຮັບເຂົ້າງົບປະມານ ງວດສຸດທ້າຍ ໃຫ້ໄດ້ຕາມແຜນ ຫຼື ລື່ນແຜນທີ່ວາງໄວ້. ກະກຽມສະຫຼຸບປິດສູບໂນງ ແລະ ສ້າງແຜນປີ 2025. ເອົາໃຈໃສ່ປະຕິບັດ ດຳລັດ 599, ຂໍ້ຕົກລົງ 47 ນຍ, ສຸມໃສ່ການສ້ອມແປງເສັ້ນທາງ-ຂົວ ຫຼັງລະດູຝົນ.

9. ສະເຫຼີມສະຫຼອງວັນຄູແຫ່ງຊາດ ( 7 ຕຸລາ ) 2025 ແລະ ກະກຽມ ຝຶກຊ້ອມ ແລະ ຄັດເລືອກ ນັກກິລາ ເຂົ້າຮ່ວມງານມະຫາກິລາແຫ່ງຊາດຄັ້ງທີ 12 ທີ່ນະຄອນຫຼວງວຽງຈັນ, ສູ້ຊົນສ້າງບ້ານດົບດາກເມືອງຕຸ້ມລານໃຫ້ເປັນບ້ານທ່ອງທ່ຽວ. ກະກຽມແຜນຕ້ານແລ້ງ - ຕ້ານອັກຄີໄພ, ໄພພິບັດທາງທຳມະຊາດ ແລະ ພະຍາດລະບາດໃນນາຊົ່ວງເຂົ້າກອກນາ.

10. ປັບປຸງການຈັດຕັ້ງຍຸບ - ໂຮມພະແນກການຂອງແຂວງ, ຫ້ອງການຂັ້ນເມືອງ ທີ່ຍັງບໍ່ທັນສຳເລັດ, ຕິດພັນກັບການປະກາດມອບ - ຮັບ ໜ້າທີ່ຫົວໜ້າພະແນການ ແລະ ຫ້ອງການເມືອງ. ສືບຕໍ່ຄົ້ນຄ້ວາ - ທົດລອງ ການສ້າງຕັ້ງຕາແສງແລະ ການສ້າງຫ້ອງການປະຕູດຽວເມືອງລະຄອນເພັງໃຫ້ສຳເລັດ.

11. ປະເມີນມາດຖານພັດທະນາ, ມາດຖານທຸກຍາກ ຕາມດຳລັດ 348 ນຍ ໃຫ້ສຳເລັດ, ຄົ້ນຄ້ວາ ການລົງກໍ່ສ້າງຮາກຖານ ໃນໄລຍະ ທີ 1( 2026-2028) , ກະກຽມການດຳເນີນການ ສ້າງແຜນ ພະນັກງານນຳ ພາຄຸ້ມຄອງ ໃນໄລຍະ 5 ປີ.

12. ກະກຽມພິມປະແລກ ປ່ຽນ-ເຊັນບົດບັນທຶກ ຕິດພັນກັບການສະເໜີ ໂຕຂອງຄະນະບໍລິຫານງານພັກແຂວງ, ຄະນະກຳມະການປົກຄອງແຂວງ ສະໄໝທີ X ຕໍ່ບັນດາແຂວງ ຂອງ ສສ ຫວຽດນາມ; ກະກຽມ ເນື້ອໃນ ແລະ ເຂົ້າຮ່ວມກອງປະຊຸມຮັກສາຄວາມເປັນລະບຽບຮຽບຮ້ອຍບໍລິເວນຊາຍແດນ ຄັ້ງທີ 14 ທີ່ ຈັງຫວັດ ອຸບົນຣາຊະທານີ ເປັນເຈົ້າພາບ. ຕິດຕາມ ແລະ ຊຸກຍູ້ ການປັບປຸງ - ກໍ່ສ້າງອາຄານບ່ອນ ເຮັດ ວຽກຂອງດ່ານປະເພນີ ດອນໝາກເກືອ ເມືອງລະຄອນເພັງ.

13. ກະກຽມດຳເນີນກອງປະຊຸມ ສະໄໝວິສາມັນ ເທື່ອທີ 1, ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງ ສະພາປະຊາຊົນແຂວງ ຊຸດທີ 4 ແລະ ກະກຽມເລືອກຕັ້ງສະມາຊິກສະພາປະຊາຊົນແຂວງ ຊຸດທີ 5.

IV. ມາດຕະການຈັດຕັ້ງປະຕິບັດ

1. ມອບໃຫ້ຄະນະບໍລິຫານງານພັກແຂວງສະໄໝທີ X, ເລຂາຄະນະພັກຮາກຖານ, ໜ່ວຍພັກພະແນກການອ້ອມຂ້າງແຂວງ, ເລຂາພັກເມືອງ ນໍາ ໄປຄົ້ນຄວ້າເຊື່ອມຊຶມ ແລະ ຜັນຂະຫຍາຍ ໃຫ້ເປັນແຜນ ເຄື່ອນໄຫວ ແລະ ແຜນປະຕິບັດງານ, ໂຄງການ ແລະ ກິດຈະກໍາລະອຽດ ເພື່ອສູ້ຊົນເຮັດສໍາເລັດຕາມ ຄາດໝາຍ.

2. ຕ້ອງສ້າງແຜນ ແລະ ດໍາເນີນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງ ປະຕິບັດໂດຍ ກໍເອົາກອງປະຊຸມຄົບຄະນະບໍລິຫານງານພັກແຂວງທຸກໆ 3 ເດືອນ ເປັນການສະຫຼຸບຕີລາຄາຜົນສໍາ ເລັດຂອງວຽກງານ, ພ້ອມທັງຊຸກຍູ້ ຕິດຕາມ ກວດກາການຈັດ ຕັ້ງປະຕິບັດ ໃນແຕ່ລະໄລຍະຢ່າງເປັນປົກກະຕິ, ຕໍ່ເນື່ອງ.

ຕ. ຄະນະບໍລິຫານງານພັກແຂວງ

ເລຂາ

ປອ. ດາວວົງ ພອນແກ້ວ